Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org

# ຂໍ້ແນະນຳ
# ເຕັກນິກການປູກຜັກກະລໍ່າປີ



ເອກະສານ ປະກອບການຝຶກອົບຮົມ 03:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື່ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບຼອກໂຄລີ
3. ເຕັກນິກການປູກຜັກກະລ່ຳປີ
4. ເຕັກນິກການປູກຜັກກະລ່ຳດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໝູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຂີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 03:
# ແນະນຳເຕັກນິກການປູກຜັກກະລ່ຳປີ

## ສາລະບານ

ກະລ່ຳປີ(Cabbage)........................................................................2
ລັກສະນະທົ່ວໄປ ........................................................................ 2
ແນວພັນ ........................................................................3
ການກຽມດິນ........................................................................4
ການປູກ ........................................................................4
ການບົວລະບັດຮັກສາ ........................................................................5
ການເກັບກ່ຽວ ........................................................................6

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003



## ການພອນດິນກຳຈັດຫຍ້າ

ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລວ່ງຜຸຜົງລະບາຍອາກາດ ແລະ ນ້ຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມໆກັນ. ເມື່ອຕົ້ນພືດມີ ໃບປົກຄຸມດິນແລ້ວ ບໍ່ຈຳເປັນເຮັດເລີຍ.

## ການເກັບກ່ຽວ

ອາຍຸເກັບກ່ຽວຂອງກະລ່ຳປີແຕ່ລະພັນບໍ່ຄືກັນສຳລັບພັນດໍທີ່ນິຍົມປູກໃນ ບ້ານເຮົາອາຍຸການ ເກັບກ່ຽວປະມານ 50 ຫາ 60 ວັນ ແຕ່ເປັນພັນປີມີອາຍຸເຖິງ 120 ວັນ.

# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ພືດດັ່ງກ່າວນີ້ຕ້ອງການຝຸ່ນພໍສົມຄວນ ດັ່ງນັ້ນ ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ການລຸດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະດ້ານການຈະເລີນເຕີບໂຕທາງໃບ ແລະ ທາງກ້ານ ຫຼືລຳຕົ້ນ ແມ່ນມີຄວາມຈຳເປັນນຳໃຊ້ທາດອາຫານຕົ້ນຕໍເຊັ່ນ: ໄນໂຕເຈນ ແລະໂປຕັດຊຽມ ເພື່ອໃຊ້ໃນການຈະເລີນເຕີບໂຕ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ຝຸ່ນ ເຄມີສູດ 13 - 13 - 21 ຫຼືສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ກິໂລ/ເຮັກຕາ ໂດຍແບ່ງໃສ່ 3 ເທື່ອ: ເທື່ອທີ່ 1: ໃສ່ ເຄິ່ງນຶ່ງ ເປັນຝຸ່ນຮອງພື້ນຕອນປູກແລ້ວພວນດິນປົກ. ເທື່ອທີ່ 2: ໃຫ້ໃສ່ ເມື່ອພືດມີອາຍຸປະມານ 10 ຫາ 20 ວັນ ຫຼັງຍ້າຍປູກຈຳນວນເຄິ່ງໜຶ່ງຈາກສ່ວນທີ່ເຫຼືອຄັ້ງທຳອິດພ້ອມນີ້ອາດຈະເພີ່ມຝຸ່ນຢູເຣັຍອີກ 60 ຫາ 80 ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕລຳຕົ້ນ ແລະໃບ. ເທື່ອ ທີ:3 ໃສ່ເມື່ອອາຍຸໄດ້ 20 ຫາ 30 ວັນ ຈາກສ່ວນທີ່ເຫຼືອ ທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

## ການໃຫ້ນ້ຳ

ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ປຽກເກີນໄປໂດຍເບິ່ງຄວາມຊຸ່ມຊື່ນໃນໜານປູກ.



# ຂໍ້ແນະນຳເຕັກນິກການປູກຜັກກະລ່ຳປີ



## ກະລ່ຳປີ (Cabbage)

ກະລ່ຳປີ ເປັນຜັກປະເພດກິນໃບ ໂດຍແມ່ນໃບຫໍ່ເຂົ້າກັນກາຍເປັນຫົວໃຊ້ບໍລິໂພກພາກສ່ວນໃບ (ຫົວ) ເປັນຜັກສົດ. ຫຼື ໃຊ້ເປັນສ່ວນປະກອບອາຫານໄດ້ຫຼາຍຢ່າງນອກຈາກນີ້ຍັງສາມາດນຳໃຊ້ເປັນຢາສະໝຸນໄພ (ພື້ນເມືອງ) ສຳລັບພະຍາດກະເພາະລຳໄສ້ຂອງຄົນເຮົາອີກດ້ວຍ.

## ລັກສະນະທົ່ວໄປ

ກະລ່ຳປີ ເປັນຜັກທີ່ຢູ່ໃນຕະກຸນ Cruciferae ມີຊື່ທາງວິທະຍາສາດວ່າ: Brassica oleracea var. capitata Linn. ໃນເມື່ອກ່ອນກະລ່ຳປີເປັນພືດເຂດອົບອຸ່ນເມດີເຕລານຽນແຖບຢູໂຣບຕໍ່ມາ ຈຶ່ງແຜ່ລາມມາບ້ານເຮົາ ຊຶ່ງໃນສະໄໝກ່ອນກະລ່ຳປີປູກໄດ້ດີແຕ່ລະດູໜາວຕໍ່ມາມີການພັດທະນາສ້າງແນວພັນສຳລັບເຂດຮ້ອນ (ທົນຕໍ່ຄວາມຮ້ອນ) ເໝາະສົມກັບສະພາບອາກາດບ້ານເຮົາ.

ກະລ່ຳປີເປັນຜັກອາຍຸ 2 ປີ ແຕ່ປູກເປັນຜັກອາຍຸປີດຽວ (Annual) ອາຍຸແຕ່ຍ້າຍປູກຈົນເຖິງເກັບກ່ຽວ ປະມານ 50 ຫາ 120 ວັນ ຂຶ້ນກັບແນວພັນດີ ຫຼື ບໍ່. ປູກໄດ້ຜົນດີໃນຊ່ວງເດືອນ ຕຸລາ ຫາ ມັງກອນ. ກະລ່ຳປີສາມາດຂຶ້ນໄດ້ໃນດິນເກືອບທຸກສະນິດແຕ່ມັກດິນຊາຍແກມຕົມ ປະຕິກິຣິຍາຂອງດິນ(pH) 6 ຫາ 6.5. ມັກຄວາມຊຸ່ມຊື່ນ ໃນດິນສູງພໍສົມຄວນ ແລະ ຕ້ອງ ໄດ້ຮັບແສງແດດຫຼາຍ ອຸ່ນຫະພູມເໝາະສົມ ປະມານ 15 ຫາ 20°C.

## ແນວພັນ

ກະລ່ຳປີສາມາດແຍກໄດ້ເປັນ 3 ກຸ່ມໃຫຍ່ຄື:

ກະລ່ຳປີທຳມະດາ (Common Cabbage): ກະລ່ຳປີຊະນິດນີ້ມີຜູ້ປູກຫຼາຍ ແລະນິຍົມບໍລິໂພກຫຼາຍ ມີລັກສະນະຫົວກົມ ມີສີຂຽວຫາຂຽວອ່ອນ ເປັນພັນທີ່ທົນຕໍ່ອາກາດຮ້ອນ ອາຍຸການເກັບກ່ຽວສັ້ນໄດ້ແກ່ພັນລູກປະສົມ King of Yield /ເຄວາຍ (KY)/ ພັນລູກປະສົມ King of King /ເຄເຄ (KK)/ ພັນ ໂຄເປັນຮາເກັນ ຫຼື ພັນໂກເດນເອເຄເປັນຕົ້ນ.

ກະລ່ຳປີແດງ (Red Cabbage): ມີລັກສະນະຫົວຂ້ອນຂ້າງກົມມີສີແດງແກມຊົມພູ ສ່ວນໃຫຍ່ມີອາຍຸການເກັບກ່ຽວປານກາງ ແລະຍາວຕ້ອງການອາກາດໜາວເຢັນພໍສົມຄວນໄດ້ແກ່ພັນລູກລູບີຄອນ, ລູບີເພີເຟັກຊັນ (Ruby perfection).





ກະລ່ຳປີໃບຍົກ (Savoy Cabbage)/var. sabauda L./ ): ມີລັກສະ ນະໃບຍົກ ແລະເປັນຄື້ນຫຼາຍ ຕ້ອງການອາກາດໜາວເຢັນໃນຊ່ວງເວລາ ປູກ ແລະຊ່ວງໄລຍະການຈະເລີນເຕີບໂຕພືດຊະນິດນີ້ແມ່ນນິຍົມປູກໃນເຂດໜາວ (ຢູໂຣບ, ອາເມລິກາເໜືອ).

## ການຕຽມດິນ

ຂຸດໄຖເລິກປະມານ 15 ຫາ 20 ຊຕມ. ຕາກດິນໄວ້ປະມານ 5 ຫາ 10 ວັນ ປົນດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມ. ຖ້າເປັນໜານກ້າເບ້ຍຕ້ອງທຸບໜ້າດິນໃຫ້ລະອຽດເພື່ອບໍ່ໃຫ້ເມັດທີ່ມີຂະໜາດນ້ອຍຕົກເລິກ ລົງໄປໃນດິນຈະເຮັດໃຫ້ບໍ່ງອກ ແຕ່ຖ້າເປັນໜານປູກ ໃຫ້ທຸບດິນທຳມະດາ ບໍ່ລະອຽດຫຼາຍກໍໄດ້.

## ການປູກ

ເນື່ອງຈາກກະລ່ຳປີນິຍົມປູກໃນບ້ານເຮົາ ເປັນພັນດໍມີຊີງພຸ່ມ ແລະຫົວຂະໜາດນ້ອຍ. ດັ່ງນັ້ນ, ໃຊ້ໄລຍະປູກລະຫວ່າງຕົ້ນ ແລະ ແຖວປະມານ 40 x 40 ຊຕມ. ການປູກອາດຈະປູກ ແບບແຖວດຽວ ຫຼືແຖວຄູ່ກໍໄດ້.